ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 2865/ກປ

ນະຄອນຫຼວງວຽງຈັນ, ວັນທີ 10 SEP 2014

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຜະລິດ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກຳ

- ອີງຕາມກົດໝາຍວ່າດ້ວຍສະຖິຕິ ເລກທີ 03/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍສະຖິຕິ ເລກທີ 475/ລບ,ລົງວັນທີ 18 ຕຸລາ2012;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ກະຊວງກະສິກຳ ແລະປ່າໄມ້
- ອີງຕາມໜັງສືສະເໜີຂອງກົມແຜນການ ແລະການຮ່ວມມື ເລກທີ 4520/ກພຮ, ລົງວັນທີ 03/09/2014

## ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການການຜະລິດ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກຳ ເພື່ອສ້າງ, ປັບປຸງ ແລະ ຍົກລະດັບຄຸນນະພາບຂອງສະຖິຕິກະສິກຳ ແຕ່ສູນກາງ ຮອດທ້ອງຖິ່ນໃຫ້ມີຄວາມເປັນເອກະພາບ, ເຂັ້ມແຂງ ແລະ ມີປະສິດທິພາບ ແນໃສ່ຮັບປະກັນຂໍ້ມູນສະຖິຕິກະສິກຳ ໃຫ້ຖືກຕ້ອງ, ຄົບຖ້ວນ, ຊັດເຈນ, ທັນເວລາ ແລະ ສອດຄ່ອງກັບສະພາບຕົວຈິງທັງຮັບປະກັນການເຊື່ອມ ໂຍງເຂົ້າກັບລະບົບສະຖິຕິແຫ່ງຊາດ ແລະ ສາກົນປະກອບສ່ວນເຂົ້າໃນການສ້າງແຜນພັດທະນາ, ກຳນົດເປັນນະ ໂຍບາຍ ແລະ ແຜນຍຸດທະສາດຂອງຂະແໜງກະສິກຳ ແລະ ປ່າໄມ້.

**ມາດຕາ 2 ສະຖິຕິກະສິກຳ**

ສະຖິຕິກະສິກຳ ແມ່ນຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ, ການລາຍງານບໍລິຫານ ແລະ ການຄົ້ນຄວ້າທົດລອງ ໂດຍຜ່ານຂະບວນການເກັບກຳ, ການສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໃຈ ແລະ ການວິເຄາະ ຕາມຫຼັກວິທະຍາສາດສະຖິຕິກ່ຽວກັບການຜະລິດພືດ, ສັດລ້ຽງ, ປະມົງ, ຊົນລະປະທານ, ປ່າໄມ້, ຜະລິດຕະພັນປ່າໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອເປັນແຫຼ່ງສະໜອງສະຖິຕິທີ່ຊັດເຈນ ແລະ ທັງເປັນໄມ້ຫຼາວັດແທກລະດັບການເໜັງຕີງທາງດ້ານເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ໃນແຕ່ລະໄລຍະ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຜະລິດສະຖິຕິ** ໝາຍເຖິງ ຂະບວນການເກັບກຳ, ສັງລວມ, ຄິດໄລ່, ວິເຄາະ, ວິໃຈ ແລະ ເຜີຍແຜ່ຂໍ້ມູນສະຖິຕິ ຈາກການສຳຫຼວດ, ການລາຍງານບໍລິຫານ ແລະ ການຄົ້ນຄວ້າທົດລອງ ຕາມຫຼັກວິທະຍາສາດສະຖິຕິ;

2. **ການສຳຫຼວດໃຫຍ່** ໝາຍເຖິງ ການສຳຫຼວດທີ່ກວມເອົາທຸກຫົວໜ່ວຍເປົ້າໝາຍ ຕາມຈຸດປະສົງ ຂອງການສຳຫຼວດນັ້ນ ໂດຍບໍ່ມີການນຳໃຊ້ຫຼັກການການຄັດເລືອກຕົວແທນ;

3. **ການສຳຫຼວດແບບຕົວແທນ** ໝາຍເຖິງ ການສຳຫຼວດບາງຫົວໜ່ວຍເປົ້າໝາຍທີ່ຜ່ານການຄັດເລືອກຕົວແທນ ຕາມຫຼັກວິທະຍາສາດສະຖິຕິຂອງການອອກແບບຕົວແທນ ຕາມຈຸດປະສົງຂອງການສຳຫຼວດນັ້ນ ຊຶ່ງສາມາດເປັນຕົວແທນລະດັບຊາດ ຫຼື ລະດັບແຂວງ, ເມືອງ ແລະ ບ້ານ;

4. **ການສຳຫຼວດສະເພາະ** ໝາຍເຖິງ ການສຳຫຼວດຂະໜາດນ້ອຍ ໂດຍລົງເລິກສະເພາະຂົງເຂດໃດໜຶ່ງທີ່ມີໃນແຜນ ຫຼື ບໍ່ມີໃນແຜນການສຳຫຼວດ ຊຶ່ງສາມາດຈັດຕັ້ງໄດ້ທຸກເວລາ ຕາມຄວາມຕ້ອງການເພີ່ມເຕີມ, ຮີບດ່ວນ, ຈຳເປັນ ແລະ ໃນກໍລະນີທີ່ມີພາວະສຸກເສີນເກີດຂຶ້ນ;

5. **ການລາຍງານຕົວຊີ້ບອກ** ໝາຍເຖິງ ດັດຊະນີໝາຍ ທີ່ຄິດໄລ່ອອກມາເປັນຕົວເລກສະຖິຕິຊຶ່ງສ່ອງ ແສງເຖິງ ຂະໜາດ, ລະດັບການຂະຫຍາຍຕົວຂອງການພັດທະນາ, ໂຄງປະກອບ, ອັດຕາສ່ວນພົວພັນທາງດ້ານເສດຖະກິດ-ສັງຄົມ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ຄວາມໝັ້ນຄົງ ໃນສະຖານທີ່ ແລະ ໄລຍະ ເວລາໃດໜຶ່ງ;

6. **ຂໍ້ມູນດິບ** ໝາຍເຖິງ ຂໍ້ມູນ ຫຼື ຕົວເລກທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານທີ່ຍັງບໍ່ທັນໄດ້ຮັບການຜະລິດຢ່າງຄົບຊຸດ ຕາມຫຼັກວິທະຍາສາດສະຖິຕິ;

7. **ການປຸງແຕ່ງສະຖິຕິກະສິກຳ** ໝາຍເຖິງຂັ້ນຕອນໜຶ່ງຂອງການຜະລິດສະຖິຕິ ກ່ຽວກັບການສຶກສາຄວາມສອດຄ່ອງ ຫຼື ຄວາມເປັນໄປໄດ້ຂອງຂໍ້ມູນ, ການໃສ່ລະຫັດສາລະບານ, ການຈັດລຽງລຳດັບ, ການຈັດໝວດ, ການຈັດກຸ່ມ ຕາມຫຼັກວິທະຍາສາດສະຖິຕິ;

8. **ຜູ້ສະໜອງຂໍ້ມູນ** ໝາຍເຖິງ ບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ຕັ້ງພູມລຳເນົາຢູ່ ສປປ ລາວທີ່ໄດ້ສະໜອງຂໍ້ມູນສະຖິຕິ

**ມາດຕາ 4 ຫຼັກການພື້ນຖານຂອງວຽກງານສະຖິຕິກະສິກຳ**

ການຜະລິດ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກຳ ຕ້ອງຮັບປະກັນຫຼັກການພື້ນຖານຂອງວຽກງານສະຖິຕິດັ່ງນີ້:

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບທາງດ້ານເຕັກນິກ, ວິທີການ, ນິຍາມຂອງຂະແໜງກະສິກຳ ແລະ ປ່າໄມ້ ແຕ່ສູນກາງ ຮອດທ້ອງຖິ່ນ;

2. ຮັບປະກັນຄວາມຖືກຕ້ອງຕາມຫຼັກວິທະຍາສາດສະຖິຕິ ແລະ ເປັນເອກະລາດທາງດ້ານວິຊາການໃນການຜະລິດ, ການເຜີຍແຜ່, ການຕອບສະໜອງຂໍ້ມູນສະຖິຕິກະສິກຳໃຫ້ຖືກ ຕ້ອງຕາມຄວາມຈິງ, ພາວະວິໄສ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ;

3. ຮັບປະກັນຄວາມເປັນເອກະພາບຂອງບັນດາຕົວຊີ້ບອກ, ລະບອບວິທີການຄິດໄລ່, ລະບົບຕາຕະລາງເກັບກຳຂໍ້ມູນ, ຫົວໜ່ວຍວັດແທກ, ລະບົບລະຫັດສາລະບານ, ໄລຍະເວລາການລາຍງານ ໂດຍໃຫ້ມີສະຖິຕິແຍກເພດໃນຂະແໜງກະສິກຳ ແລະ ປ່າໄມ້;

4. ຮັບປະກັນການເປີດເຜີຍວິທີການຜະລິດ ແລະ ການເຜີຍແຜ່ຂໍ້ມູນເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຊົມໃຊ້ຂໍ້ມູນ;

5. ຮັບປະກັນສາຍພົວພັນລະຫວ່າງ ຜູ້ຜະລິດ ແລະ ຜູ້ຊົມໃຊ້ຂໍ້ມູນສະຖິຕິ ໃຫ້ມີສິດສະເໝີພາບໃນການເຂົ້າເຖິງ ແລະ ນຳໃຊ້ສະຖິຕິກະສິກຳ ທີ່ໄດ້ເຜີຍແຜ່ ແລະ ປະກາດໃຊ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ຄົວເຮືອນກະສິກຳ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວກິດຈະກຳທີ່ກ່ຽວຂ້ອງກັບການຜະລິດ, ການສະໜອງ ແລະ ການນຳໃຊ້ສະຖິຕິກະສິກຳ ຢູ່ ສປປ ລາວ.

## ໝວດທີ 2
## ການຜະລິດສະຖິຕິກະສິກຳ

**ມາດຕາ 6 ການຜະລິດສະຖິຕິກະສິກຳ**

ການຜະລິດສະຖິຕິກະສິກຳ ແມ່ນການສ້າງສະຖິຕິກະສິກຳ ເພື່ອເປັນເຄື່ອງມືໃນການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນຂອງແຜນພັດທະນາກະສິກຳ ໃນແຕ່ລະໄລຍະ.

**ມາດຕາ 7 ການສຳຫຼວດສະຖິຕິກະສິກຳ**

ການສຳຫຼວດສະຖິຕິກະສິກຳ ແມ່ນຂະບວນການເກັບກຳຂໍ້ມູນ ຫຼື ຕົວເລກ ທີ່ໄດ້ຈາກການສຳພາດຜູ້ສະໜອງຂໍ້ມູນ ແບບທາງກົງ ຫຼື ທາງອ້ອມ ຕາມຫຼັກວິທະຍາສາດສະຖິຕິ.

ການສຳຫຼວດສະຖິຕິກະສິກຳ ປະກອບດ້ວຍການສຳຫຼວດໃຫຍ່, ການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ.

**ມາດຕາ 8 ການລາຍງານບໍລິຫານສະຖິຕິກະສິກຳ**

ການລາຍງານບໍລິຫານສະຖິຕິກະສິກຳ ແມ່ນຂະບວນການເກັບກຳ ແລະ ສັງລວມສະຖິຕິຂອງຂະແໜງກະສິກຳ ແລະ ປ່າໄມ້ ໃນແຕ່ລະຂັ້ນ ເພື່ອລາຍງານຕໍ່ຂັ້ນເທິງຖັດຕົນ ຊຶ່ງປະກອບດ້ວຍ ສະຖິຕິພືດ, ສັດລ້ຽງ, ປະມົງ, ປ່າໄມ້, ຊົນລະປະທານ, ປັດໄຈການຜະລິດ, ລາຄາສິນຄ້າກະສິກຳ ແລະ ອື່ນໆ.

ສຳລັບລາຍການຂໍ້ມູນ ແລະ ວັນເວລາການລາຍງານບໍລິຫານ ໄດ້ກຳນົດໃນເອກະສານຊ້ອນທ້າຍ ຊຶ່ງຖືເປັນສ່ວນໜຶ່ງຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 ການນຳສົ່ງຂໍ້ມູນສະຖິຕິກະສິກຳຈາກການລາຍງານບໍລິຫານ**

ການລາຍງານບໍລິຫານສະຖິຕິກະສິກຳ ຂອງບັນດາກົມ, ສະຖາບັນ ແລະ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ໃນແຕ່ລະຄັ້ງ ຕ້ອງເຮັດເປັນ ສອງ ສະບັບ ເພື່ອລາຍງານ ສູນສະຖິຕິກະສິກຳ ຂອງກົມແຜນການ ແລະ ການຮ່ວມມື ແລະ ສຳເນົາເກັບມ້ຽນເປັນຂອງຕົນ.

## ໝວດທີ 3
## ການຄຸ້ມຄອງ ແລະ ກວດກາ ສະຖິຕິກະສິກຳ

**ມາດຕາ 10 ການຄຸ້ມຄອງສະຖິຕິກະສິກຳ**

ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງສະຖິຕິກະສິກຳ ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກົມແຜນການ ແລະ ການຮ່ວມມື ເປັນໃຈກາງໃນການປະສານສົມທົບຂະແໜງການອື່ນ ຊຶ່ງມີລະບົບສາຍໄຍການຈັດຕັ້ງ ດັ່ງນີ້:

1. **ຂັ້ນສູນກາງ** ແມ່ນກົມແຜນການ ແລະ ການຮ່ວມມື ໂດຍແມ່ນສູນສະຖິຕິກະສິກຳ ເປັນເສນາທິການ;